**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---------------------------

**ກະຊວງກະສິກຳ ແລະ ປ່າໄມ້**

**ກົມປ່າໄມ້** **ເລກທີ: /ກປມ**

**ນະຄອນຫຼວງວຽງຈັນ,ວັນທີ 12 ກໍລະກົດ 2019**

**ໜັງສືເຊີນເຂົ້າຮ່ວມສົມທຽບລາຄາ**

**ເຖິງ: ບໍລິສັດ ຫລື ຫ້າງຮ້ານທີ່ມີຄຸນວຸດທິ**

1. ໂຄງການເສີມສ້າງຄວາມອາດສາມາດ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ (NE-PL NPA), ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບອະນຸມັດເງິນຊ່ວຍເຫລືອລ້າຈາກທະນາຄານໂລກ ໂດຍຜ່ານກົນໄກການສະໜອງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອດຳເນີນການປະມູນຈັດຊື້ປະເພດເຄື່ອງໃຊ້ຕ່າງໆດັ່ງລຸ່ມນີ້:
   - ❖ ປະເພດ ເຄື່ອງໄອທີ (IT)
   - ❖ ປະເພດ ເຄື່ອງສຳຫລວດ ແລະ ເຄື່ອງນຸ່ງໃສ່ລາດຕະເວນ

   ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ, ລາຍລະອຽດຂອງການສະເໜີລາຄາເຄື່ອງປະເພດຕ່າງໆແມ່ນກຳນົດໄວ້ໃນເອກະສານປະມູນຄົບຊຸດ.
2. ໂຄງການ**ເສີມສ້າງຄວາມອາດສາມາດ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ** (NE-PL NPA), ກະຊວງກະສິກຳ ແລະ ປ່າໄມ້ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາສຳລັບ ເຄື່ອງໃຊ້ປະເພດເຄື່ອງໄອທີ (IT) ແລະ ປະເພດເຄື່ອງສຳຫລວດ ແລະ ເຄື່ອງນຸ່ງໃສ່ລາດຕະເວນ ໄລຍະເວລາ ໃນການສົ່ງມອບ 60 ວັນ. ທ່ານສາມາດພົວພັນເອົາຊອງປະມູນນຳໂຄງການ ໂດຍບໍ່ໄດ້ເສຍຄ່າ ຕາມທີ່ຢູ່ລະບຸໄວ້ຂ້າງລຸ່ມນີ້, ເວລາໃນການພົວພັນເອົາຊອງປະມູນຕາມໂມງເຮັດວຽກຂອງລັດ
3. ການສົມທຽບລາຄານີ້ ຈະດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ຢູ່ໃນດຳລັດ ວ່າດ້ວຍ ການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ ສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ ລົງວັນທີ 09 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ ເລກທີ 0861/ກງ ລົງວັນທີ 05 ພຶດສະພາ 2009.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນ ວັນທີ: 31 ກໍລະກົດ 2019 ເວລາ 09:00 ໂມງ, **ສະຖານທີສົ່ງ** : ໂຄງການ**ເສີມສ້າງຄວາມອາດສາມາດ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ** ( NE-PL NPA ), ກົມປ່າໄມ້, ກະຊວງກະຊິກຳ ແລະ ປ່າໄມ້, ພະແນກຄຸ້ມຄອງປ່າສະຫງວນ, ບ້ານທັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທ 021 215000.

ດັ່ງນັ້ນ, ຈຶ່ງໄດ້ເຊີນທ່ານ ເພື່ອເຂົ້າຮ່ວມໃນການສະເໜີລາຄາໃນຄັ້ງນີ້.